# ບົດອອກຂ່າວ

## ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນທີ 13 ເມສາ ປີ 2020

## I. ສະພາບການ COVID-19 ໃນທົ່ວໂລກ

ມາຮອດເວລາ 6:00 ໂມງເຊົ້າ ຂອງວັນທີ **13 ເມສາ 2020**, ທົ່ວໂລກມີລາຍງານກໍລະນີທັງໝົດ **210** (ປະເທດ/ເຂດ).

- ກໍລະນີຢັ້ງຢືນ ຜູ້ຕິດເຊື້ອພະຍາດ COVID-19 ມີ **1,851,011** (ໃໝ່ **71,169**)
- ເສຍຊີວິດ **114,098** (ໃໝ່ **5,319**)
- ປິ່ນປົວຫາຍດີ **422,566** ຄົນ
- ມີບາງປະເທດ ຈຳນວນຄົນຕິດເຊື້ອມື້ດຽວ ມີເຖິງ **29,089** ຄົນ ແລະ ເສຍຊີວິດຫຼາຍກວ່າ **1,459** ຄົນ ຕໍ່ມື້
- ອັດຕາຄວາມຮ້າຍແຮງເພີ້ມຂຶ້ນເປັນ **6.16%** (ມື້ວານນີ້ 6.11%)

## II. ການເຝົ້າລະວັງ COVID-19 ປະຈຳດ່ານ ໃນ ສປປ ລາວ ຮອດ 5 ໂມງແລງ ຂອງວັນທີ 12 ເມສາ 2020 ຕາມດ່ານຊາຍແດນ ແລະ ສະໜາມບິນສາກົນ

### 1. ວຽກງານຈຸດຜ່ານດ່ານ

ຈຳນວນຜູ້ເດີນທາງເຂົ້າມາ ມີທັງໝົດ **1,060** ຄົນ

- ຜູ້ເດີນທາງ ຜ່ານ ດ່ານລາວ-ໄທ ທັງໝົດ **321** ຄົນ, ໃນນັ້ນ ມີແຮງງານລາວ ທີ່ກັບມາແຕ່ໄທ 23 ຄົນ ເຫຼືອນັ້ນແມ່ນ ຄົນຂັບລົດບັນທຸກຂົນສິນຄ້າ
- ຜູ້ເດີນທາງ ຜ່ານ ດ່ານລາວ-ຈີນ ທັງໝົດ **304** ຄົນ, ທັງໝົດ ແມ່ນພະນັກງານຂັບລົດບັນທຸກຂົນສິນຄ້າ
- ຜູ້ເດີນທາງ ຜ່ານ ດ່ານລາວ-ຫວຽດ ທັງໝົດ **435** ຄົນ, ທັງໝົດແມ່ນພະນັກງານຂັບລົດບັນທຸກຂົນສິນຄ້າ
- ຜູ້ເດີນທາງ ຜ່ານ ສະໜາມບິນ 00 ຄົນ
- ໃນທຸກດ່ານ ແມ່ນໄດ້ກວດວັດ ອຸນຫະພູມຮ່າງກາຍ ແລະ ບໍ່ມີຄົນເປັນໄຂ້

2. **ການເຝົ້າລະວັງ ແລະ ວິເຄາະ**

- ໃນວັນທີ 12 ເມສາ 2020, ໄດ້ ເກັບຕົວຢ່າງມາກວດທັງໝົດ **35** ຄົນ, ໃນນັ້ນ ມີຜູ້ສຳຜັດໃກ້ຊິດ ກັບຜູ້ຕິດເຊື້ອ **17** ຄົນ, ກໍລະນີມີອາການສົງໄສ **18** ຄົນ ເຊິ່ງມີ ແຮງງານລາວ ທີ່ກັບມາແຕ່ໄທ **01** ຄົນ.
- ໃນຈຳນວນ 35 ຄົນທີ່ມາກວດນັ້ນ ມີ ນະຄອນຫຼວງວຽງຈັນ 31 ຄົນ ແລະ ຕ່າງແຂວງ 04 ຄົນ ດັ່ງລຸ່ມນີ້:
  - ຈຳປາສັກ 02 ຄົນ
  - ຄຳມ່ວນ 01 ຄົນ (ແຮງງານລາວ ທີ່ກັບມາແຕ່ໄທ)
  - ຫຼວງນ້ຳທາ 01 ຄົນ
- ຜົນກວດທັງໝົດ 35 ຄົນ **ແມ່ນບໍ່ພົບເຊື້ອ**
- ນັບແຕ່ເດືອນມັງກອນ ຮອດ ວັນທີ 12 ເມສາ 2020 ໄດ້ເກັບຕົວຢ່າງມາກວດ ທັງໝົດ ມີ **1,186** ຄົນ, ກວດພົບເຊື້ອທັງໝົດ **19** ຄົນ (ມື້ນີ້ ຜົນກວດບໍ່ພົບເຊື້ອ) ແລະ ທັງໝົດ 19 ຄົນ ແມ່ນນອນປິ່ນປົວ - ຕິດຕາມ ຢູ່ໂຮງໝໍ.
- ຈຳນວນຜູ້ສຳຜັດໃກ້ຊິດທັງໝົດ ທີ່ໄດ້ຕິດຕາມ ແຕ່ວັນທີ 23 ມີນາ - 12 ເມສາ 2020 ມີ ທັງໝົດ **458** ຄົນ, ໝົດກຳນົດຕິດຕາມ ທັງໝົດ **379** ຄົນ, ຍັງສືບຕໍ່ຕິດຕາມທັງໝົດ **79** ຄົນ ເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:
  - ນະຄອນຫຼວງວຽງຈັນ 49 ຄົນ
  - ແຂວງ ໄຊສົມບູນ 25 ຄົນ
  - ແຂວງ ຫຼວງພະບາງ 02 ຄົນ
  - ແຂວງ ຄຳມ່ວນ 02 ຄົນ
  - ແຂວງ ວຽງຈັນ 01 ຄົນ
- ພະນັກງານພູເບ້ຍ ທີ່ຢູ່ໃນແຄ້ມ ມີທັງໝົດ 1,700 ຄົນ, ໃນນັ້ນ ຈຳນວນຜູ້ທີ່ສຳຜັດໃກ້ຊິດກັບ ຜູ້ຕິດເຊື້ອ 2 ກໍລະນີ ຢູ່ພູເບ້ຍ ມີທັງໝົດ 61 ຄົນ
  - ຜູ້ສຳຜັດໃກ້ຊິດ ກັບ ກໍລະນີທີ 11 ມີ 34 ຄົນ
  - ຜູ້ສຳຜັດໃກ້ຊິດ ກັບ ກໍລະນີທີ 13 ມີ 27 ຄົນ (ຢູ່ພູເບ້ຍ 18 ຄົນ, ນະຄອນຫຼວງ 08 ຄົນ, ແຂວງວຽງຈັນ 01 ຄົນ)
- ສຳລັບ ການຕິດຕາມ ສະຖານທີ່ຈຳກັດບໍລິເວນ ແລະ ຜູ້ຈຳກັດບໍລິເວນ ຢູ່ເຮືອນ ໃນທົ່ວປະເທດ

- ສະຖານທີ່ຈຳກັດບໍລິເວນ ໃນຂອບເຂດທົ່ວປະເທດ ມີ 2,142 ແຫ່ງ
- ຈຳນວນຄົນທີ່ຕິດຕາມ ຢູ່ສູນຈຳກັດບໍລິເວນ ມີ 68,534 ຄົນ
- ຈຳນວນທີ່ຈຳກັດບໍລິເວນ ຢູ່ເຮືອນຂອງຕົນເອງ ມີ 44,870 ຄົນ
- ສະເພາະ ໃນວັນທີ 12 ເມສາ 2020 ບໍ່ພົບຄົນທີ່ມີອາການສົງໄສ

- ການຈັດແບ່ງກຸ່ມຜູ້ຕິດເຊື້ອຈຳນວນ 19 ຄົນ, ໃນນັ້ນ ມີເພດຍິງ 10 ຄົນ:
  - ອາຍຸຕໍ່າສຸດ 19 ປີ, ອາຍຸສູງສຸດ 55 ປີ, ອາຍຸສະເຫຼ່ຍ 32 ປີ
  - ກຸ່ມອາຍຸ ສ່ວນໃຫຍ່ ແມ່ນຢູ່ລະຫວ່າງ 15-35 ປີ ມີ 12 ຄົນ (63.15%)

## 3. ຂໍ້ແນະນຳ

ຄະນະສະເພາະກິດ ແມ່ນມີຄວາມເປັນຫ່ວງເປັນໄຍ ຕໍ່ສຸຂະພາບຂອງປະຊາຊົນ ເປັນທີ່ສຸດ, ການວາງມາດຕະການຫຼາຍໆຢ່າງ ແມ່ນເພື່ອຫຼຸດຜ່ອນ ແລະ ຢັບຢັ້ງ ການລະບາດແຜ່ລາມຂອງພະຍາດ, ແຕ່ວ່າ ໃນບາງເຂດ, ບາງພາກສ່ວນ ແລະ ບາງຄົນ ຍັງຖືເບົາ ບໍ່ເຫັນຄວາມສຳຄັນ ໃນການຈັດຕັ້ງປະຕິບັດ ໂດຍສະເພາະ ການຈຳກັດບໍລິເວນ ເມື່ອເປັນຜູ້ສຳ

ຜັດໃກ້ຊິດຜູ້ຕິດເຊື້ອ ຫຼື ເດີນທາງມາແຕ່ເຂດລະບາດ. ສະນັ້ນ ມັນເຮັດໃຫ້ສະພາບການລະບາດ ແມ່ນມີການຂະຫຍາຍອອກສູ່ວົງກວ້າງ. ບົດຮຽນຖອດຖອນໄດ້ ຈາກການຕິດເຊື້ອ ຂອງກໍລະນີທຳອິດ ມາເຖິງປະຈຸບັນແມ່ນ:

- ຜູ້ທີ່ໄດ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອ ໄດ້ແນະນຳໃຫ້ຈຳກັດບໍລິເວນຕົນເອງ ຕິດຕາມອາການ ແລະ ລາຍງານຕໍ່ແພດ, ປະຈຸບັນ ເຮົາໄດ້ ຈັດສັນສະຖານທີ່ ໃຫ້ມາຈຳກັດບໍລິເວນ ຢູ່ກັບໂຮງໜໍເລີຍ ແລະ ຍັງຈຳນວນໜຶ່ງ ມີຄອບຄົວຊ່ວຍຕິດຕາມ ຢ່າງໃກ້ຊິດຢູ່ເຮືອນຂອງຕົນເອງ.
- ຜູ້ທີ່ຖືກສົງໄສ ໃຫ້ຈຳກັດບໍລິເວນຕົນເອງຢູ່ເຮືອນ, ຍັງຖືເບົາບໍ່ປະຕິບັດຕາມຄຳແນະນຳຢ່າງເຄັ່ງຄັດ ເຊັ່ນວ່າ: ຍັງອອກໄປພົບປະຊຸມແຊວກັບໝູ່ເພື່ອນ ແລະ ໃຊ້ຊີວິດເປັນປົກກະຕິ ຈຶ່ງມີການແຜ່ເຊື້ອໃສ່ຄົນອື່ນ.
- ສາເຫດທີ່ຕ້ອງຈຳກັດສະຖານທີ ກໍ່ເພື່ອ ຈຳກັດພະຍາດບໍ່ໃຫ້ແຜ່ລາມອອກສູ່ວົງກວ້າງຖ້າເຮົາຈຳກັດບໍລິເວນແຕ່ຫົວທີ່ໄດ້ ຜູ້ຕິດເຊື້ອກໍ່ບໍ່ສົ່ງເຊື້ອໃຫ້ຜູ້ອື່ນ. ຖ້າທ່ານໃດຫາກເດີນທາງມາແຕ່ຕ່າງປະເທດ ແລະ ໃກ້ຊິດກັບຜູ້ຕິດເຊື້ອ ແມ່ນໃຫ້ຮີບຮ້ອນຈຳກັດບໍລິເວນຕົນເອງຢູ່ເຮືອນຫຼືທີ່ພັກເຊົາ ຕ້ອງທັງລາຍງານ ພ້ອມທັງຕິດຕາມອາການຕົນເອງ ໃຫ້ສາຍດ່ວນ 166 ແລະ ບອກຂໍ້ມູນທີ່ເປັນຄວາມຈິງ ແພດໝໍ.
- ອີກນຶ່ງອາທິດ ທີ່ຈະມາເຖິງນີ້ ແມ່ນເປັນບຸນປີໃໝ່ລາວ ແມ່ນຢາກຮຽກຮ້ອງໃຫ້ທຸກໆຄົນ ເອົາໃຈໃສ່ຮ່ວມມືທີ່ສຸດ ໃນການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 06/ ນຍ ທີ່ໄດ້ເນັ້ນໜັກ, ຈຳກັດການເດີນທາງ, ຈຳກັດການອອກເຮືອນ ຖ້າບໍ່ມີຄວາມຈຳເປັນແທ້, ໃຫ້ມີການຮັກສາໄລຍະຫ່າງ, ຫຼີກລ້ຽງ ງານຊຸມແຊວເປັນກຸ່ມ, ການປະກອບວຽກງານ ທາງສາດສະໜາກໍ່ຄວນປະຕິບັດ ແບບບໍ່ມີການລວມກຸ່ມໃຫຍ່.

- ສາເຫດບໍ່ໃຫ້ຫຼິ້ນນໍ້າ ຍ້ອນ ມີເຊື້ອປົນມານຳນໍ້າເວລາຫຼິ້ນນໍ້າກັນ ເຮັດໃຫ້ມີການໃກ້ຊິດກັນ ແລະ ມີການເວົ້າ, ໄອ,ຈາມ ເຊິ່ງເຮັດໃຫ້ເຊື້ອຕົກຢູ່ນໍ້າ ແລະ ສາມາດມີອາຍຸໄດ້ເຖິງ 4-10 ວັນ.

**ຂໍຂອບໃຈ**